ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ: 2560 /ກງ
ນະຄອນຫຼວງວຽງຈັນ, ວັນທີ: 09 AUG 2016

# ຄຳແນະນຳ
## ວ່າດ້ວຍການປະຕິບັດນະໂຍບາຍພາສີ-ອາກອນ ສຳລັບການນຳເຂົ້າວັດຖຸ, ອຸປະກອນ ແລະ ພາຫະນະຕ່າງໆຂອງແຜນງານ/ໂຄງການ ທີ່ນຳໃຊ້ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກຕ່າງປະເທດ

- ອີງຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ສະບັບປັບປຸງ) ສະບັບເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015;
- ອີງຕາມກົດໝາຍວ່າດ້ວຍພາສີ (ສະບັບປັບປຸງ) ສະບັບເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມກົດໝາຍ ວ່າດ້ວຍສ່ວຍສາອາກອນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມກົດໝາຍ ວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 52/ສພຊ, ລົງວັນທີ 23 ກໍລະກົດ 2014;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການປະຢັດ ແລະ ຕ້ານການຟູມເຟືອຍ, ສະບັບເລກທີ 78/ລບ, ລົງວັນທີ 10 ມີນາ 2015;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ, ສະບັບເລກທີ 80/ນຍ, ລົງວັນທີ 28ກຸມພາ 2007;

ລັດຖະມົນຕີກະຊວງການເງິນ ອອກຄຳແນະນຳ:

### 1. ຈຸດປະສົງ

ຄຳແນະນຳສະບັບນີ້ ແມ່ນວາງອອກເພື່ອກຳນົດການປະຕິບັດນະໂຍບາຍພາສີ-ອາກອນ, ຂັ້ນຕອນ ແລະ ວິທີການອະນຸມັດ ສຳລັບການນຳເຂົ້າວັດຖຸ, ອຸປະກອນ ແລະ ພາຫະນະຕ່າງໆຂອງແຜນງານ/ໂຄງການ ທີ່ນຳໃຊ້ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກຕ່າງປະເທດ (ຕໍ່ໄປນີ້ ເອີ້ນຫຍໍ້ວ່າ ແຜນງານ /ໂຄງການ), ແນໃສ່ສ້າງເງື່ອນໄຂສະດວກໃຫ້ແກ່ບັນດາກະຊວງ/ຂະແໜງການ ແລະ ທ້ອງຖິ່ນ ສາມາດຈັດຕັ້ງປະຕິບັດແຜນງານ/ໂຄງການ ໄດ້ຢ່າງຄ່ອງຕົວ, ນຳໃຊ້ທຶນຮອນຢ່າງປະຢັດ ແລະ ມີປະສິດທິຜົນ, ຮັບປະກັນການນຳເຂົ້າ ມີຄວາມໂປ່ງໃສ ແລະ ກວດສອບໄດ້.

### 2. ນະໂຍບາຍພາສີ-ອາກອນ

ການປະຕິບັດນະໂຍບາຍ ແລະ ພັນທະພາສີ-ອາກອນ ສຳລັບການນຳເຂົ້າວັດຖຸ, ອຸປະກອນ ແລະ ພາຫະນະຕ່າງໆຂອງແຜນງານ/ໂຄງການ ຕ້ອງດຳເນີນຕາມການຕົກລົງໃນສັນຍາຮ່ວມມື, ສັນຍາສະໜອງທຶນ ຫຼື ໜັງສືແລກປ່ຽນທີ່ລັດຖະບານ ໄດ້ອະນຸຍາດໃຫ້ເຊັນກັບຜູ້ໃຫ້ທຶນຄື:

(ກ) ໃນກໍລະນີສັນຍາຮ່ວມມື, ສັນຍາສະໜອງທຶນ ຫຼື ໜັງສືແລກປ່ຽນ ກຳນົດໃຫ້ຍົກເວັ້ນພາສີ-ອາກອນ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ປະຕິບັດການຍົກເວັ້ນຕາມເນື້ອໃນດັ່ງກ່າວ.

(ຂ) ໃນກໍລະນີສັນຍາຮ່ວມມື, ສັນຍາສະໜອງທຶນ ຫຼື ໜັງສືແລກປ່ຽນ ບໍ່ໄດ້ກຳນົດການຍົກເວັ້ນ ແມ່ນໃຫ້ປະຕິບັດພັນທະພາສີ-ອາກອນ ແລະຄ່າທຳນຽມຕ່າງໆ.

3. ການຮັບຮອງແຜນນຳເຂົ້າ

(ກ) ພາກສ່ວນຮັບຜິດຊອບແຜນງານ/ໂຄງການ ມີໜ້າທີ່ສ້າງແຜນການນຳເຂົ້າ (Master List) ວັດຖຸ, ອຸປະກອນ ແລະ ພາຫະນະຕ່າງໆ ບົນພື້ນຖານການອອກແບບ, ການຄິດໄລ່ ໃຫ້ສອດຄ່ອງກັບລະບຽບການ ທີ່ອົງການກ່ຽວຂ້ອງ ຮັບຮອງ, ຮັບປະກັນຫຼັກການປະຢັດ ແລະ ມີປະສິດທິຜົນ ເຊັ່ນ ອີງຕາມມາດຕາ 8 ຂອງດຳລັດສະບັບເລກທີ 78/ລບ, ລົງວັນທີ 10 ມີນາ 2015: ຫ້າມໃຊ້ງົບປະມານຂອງລັດ, ວິສາຫະກິດຂອງລັດ ແລະ ເງິນຊ່ວຍເຫຼືອທາງການເພື່ອການພັດທະນາ ເພື່ອຊື້ພາຫະນະ ທີ່ຫຼູຫຼາ ແລະ ມີລາຄາສູງເກີນ ສີ່ຮ້ອຍລ້ານກີບ ຮັບໃຊ້ບໍລິຫານລວມ ແລະ ຮັບໃຊ້ພະນັກງານຕຳແໜ່ງບໍລິຫານ;

(ຂ) ໃນແຜນການນຳເຂົ້າ ຕ້ອງລະບຸຈະແຈ້ງປະເພດ, ໝວດສິນຄ້າ, ຮູບແບບການນຳເຂົ້າ (ຊົ່ວຄາວ ຫຼື ຖາວອນ), ອາຍຸການນຳໃຊ້ຂອງແຜນການນຳເຂົ້າ, ນະໂຍບາຍພາສີ-ອາກອນ ແລະຄ່າທຳນຽມຕ່າງໆ (ຍົກເວັ້ນ ຫຼື ບໍ່ຍົກເວັ້ນ);

(ຄ) ຂັ້ນຕອນການຮັບຮອງແຜນນຳເຂົ້າ ມາຮັບໃຊ້ແຜນງານ/ໂຄງການທີ່ມີການກໍ່ສ້າງ-ສ້ອມແປງຂະໜາດໃຫຍ່ ມີດັ່ງນີ້:

+ ໂຄງການກໍ່ສ້າງ-ສ້ອມແປງ ຂົວ, ທາງ, ທາງນ້ຳ, ທາງທໍ່, ທາງລົດໄຟ, ສະໜາມບິນ, ຕະຝັ່ງເຈື່ອນ, ນ້ຳປະປາ ແລະ ອາຄານສຳນັກງານ ແມ່ນໃຫ້ສະເໜີເຖິງກະຊວງໂຍທາທິການ ແລະ ຂົນສົ່ງ ພິຈາລະນາກວດກາການປະຕິບັດມາດຕະຖານທາງດ້ານເຕັກນິກ ແລະ ຮັບຮອງແຜນດັ່ງກ່າວ;

+ ໂຄງການກໍ່ສ້າງ-ສ້ອມແປງ ໂຮງງານຜະລິດໄຟຟ້າ (ພະລັງງານນ້ຳ, ພະລັງງານຄວາມຮ້ອນ, ພະລັງງານແສງຕາເວັນ, ພະລັງງານຊີວະມວນ ແລະພະລັງງານລົມ), ສະຖານີ ແລະ ສາຍສົ່ງໄຟຟ້າ ແມ່ນໃຫ້ສະເໜີເຖິງກະຊວງພະລັງງານ ແລະ ບໍ່ແຮ່ ພິຈາລະນາກວດກາການປະຕິບັດມາດຕະຖານທາງດ້ານເຕັກນິກ ແລະ ຮັບຮອງແຜນດັ່ງກ່າວ;

+ ແຜນງານ/ໂຄງການກໍ່ສ້າງ-ສ້ອມແປງ ຊົນລະປະທານ, ອ່າງເກັບນ້ຳ ແລະ ຄູກັ້ນນ້ຳ ແມ່ນໃຫ້ສະເໜີເຖິງກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາກວດກາການປະຕິບັດມາດຕະຖານທາງດ້ານເຕັກນິກ ແລະ ຮັບຮອງແຜນດັ່ງກ່າວ;

(ງ) ການສະເໜີຂໍນຳເຂົ້າວັດຖຸ, ອຸປະກອນ ແລະ ພາຫະນະຕ່າງໆສຳລັບແຜນງານ/ໂຄງການ ທີ່ບໍ່ນອນໃນຂໍ້ (ຄ) ຂ້າງເທິງນີ້ມີຄື: ໂຄງການຂະໜາດນ້ອຍ, ບາງກິດຈະກຳທີ່ສຳຄັນຂອງໜ່ວຍງານລັດ ມີການນຳເຂົ້າບໍ່ຫຼາຍ (ຫຼື ນຳເຂົ້າເທື່ອດຽວ) ທີ່ໄດ້ຮັບການຊ່ວຍເຫຼືອຈາກຕ່າງປະເທດ ເຊັ່ນ ຈາກລັດຖະບານຕ່າງປະເທດ, ສະຖາບັນການເງິນສາກົນ, ອົງການຈັດຕັ້ງສາກົນ (ລວມທັງອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ (NGOs) ແລະ ອົງການທີ່ບໍ່ຫວັງຜົນກຳໄລຕ່າງໆ), ມູນນິທິ, ນິຕິບຸກຄົນ, ບຸກຄົນຕ່າງປະເທດ ແລະ ນິຕິບຸກຄົນຊ່ວຍເຫຼືອສັງຄົມທີ່ລັດຖະບານຮັບຮອງ, ແມ່ນໃຫ້ປະຕິບັດດັ່ງນີ້:

+ ກະຊວງ/ຂະແໜງການ ຫລື ທ້ອງຖິ່ນ ທີ່ໄດ້ຮັບການຊ່ວຍເຫຼືອ ຢັ້ງຢືນຄວາມຖືກຕ້ອງ ແລະສອດຄ່ອງຕາມເປົ້າໝາຍຂອງແຜນງານ/ໂຄງການ/ກິດຈະກຳ ໃນແຕ່ລະການສະເໜີນຳເຂົ້າ, ສົ່ງເຖິງກະຊວງການເງິນ ເພື່ອພິຈາລະນາອະນຸມັດຕາມລະບຽບການ;

+ ໂຄງການທີ່ໄດ້ຮັບການຊ່ວຍເຫຼືອລ້າຈາກອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ (NGOs), ບຸກຄົນ, ນິຕິບຸກຄົນ, ມູນນິທິຕ່າງໆ ແມ່ນໃຫ້ກະຊວງ/ຂະແໜງການ ຫຼື ທ້ອງຖິ່ນ ທີ່ເປັນເຈົ້າຂອງໂຄງການ ສະເໜີເຖິງກະຊວງການຕ່າງປະເທດ ເພື່ອພິຈາລະນາອະນຸມັດຕາມລະບຽບການ.

(ຈ) ການສະເໜີຂໍນຳເຂົ້າວັດຖຸ, ອຸປະກອນ ແລະພາຫະນະຕ່າງໆ ຕິດພັນກັບຊ່ຽວຊານ ທີ່ເຊັນສັນຍາວ່າຈ້າງກັບແຜນງານ/ໂຄງການ ເພື່ອມາຮັບໃຊ້ສ່ວນຕົວ ແມ່ນຈະບໍ່ໄດ້ຮັບການຍົກເວັ້ນພາສີ-ອາກອນ ແລະ ຄ່າທຳນຽມຕ່າງໆ.

(ສ) ຫາກມີກໍລະນີສຸກເສີນ ຫຼື ມີການປັບປຸງແຜນການຈັດຕັ້ງປະຕິບັດແຜນງານ/ໂຄງການ ແລະ ມີຄວາມຈຳເປັນດັດແກ້ແຜນການນຳເຂົ້າ ແມ່ນໃຫ້ດຳເນີນຂັ້ນຕອນຂໍການຮັບຮອງຄືນໃໝ່.

4. ຂັ້ນຕອນການພິຈາລະນາການປະຕິບັດນະໂຍບາຍພາສີ-ອາກອນ

(ກ) ພາຍຫຼັງແຜນນໍາເຂົ້າໄດ້ຖືກຮັບຮອງແລ້ວ, ໃຫ້ພາກສ່ວນຮັບຜິດຊອບການຈັດຕັ້ງປະຕິບັດແຜນງານ/ໂຄງການ ສົ່ງແຜນດັ່ງກ່າວໃຫ້ກະຊວງການເງິນ ເພື່ອອອກຂໍ້ຕົກລົງ ນໍາໃຊ້ເປັນບ່ອນອີງໃຫ້ແກ່ການປະຕິບັດນະໂຍບາຍ ພາສີ-ອາກອນ ແລະ ຄ່າທໍານຽມຕ່າງໆ.

(ຂ) ເອກະສານປະກອບສໍາລັບການພິຈາລະນາ ມີດັ່ງນີ້:

+ ໜັງສືສະເໜີຂອງພາກສ່ວນຮັບຜິດຊອບການຈັດຕັ້ງປະຕິບັດແຜນງານ/ໂຄງການ ເຊັ່ນໂດຍຜູ້ສັ່ງການ (ລັດຖະມົນຕີກະຊວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫລວງວຽງຈັນ) ເຖິງທ່ານລັດຖະມົນຕີກະຊວງການເງິນ;
+ ສັນຍາຮ່ວມມື/ສັນຍາສະໜອງທຶນ/ໜັງສືແລກປ່ຽນ (ປະກອບມາໃນຄັ້ງທໍາອິດ);
+ ແຜນຈັດຊື້-ຈັດຈ້າງປະຈໍາປີຂອງແຜນງານ/ໂຄງການທີ່ຜູ້ໃຫ້ທຶນໄດ້ຮັບຮູ້;
+ ສັນຍາຊື້-ຂາຍ ລະຫວ່າງເຈົ້າຂອງໂຄງການກັບຜູ້ສະໜອງສິນຄ້າ;
+ ໃບແຈ້ງລາຄາສິນຄ້າ (Invoice);
+ ໃບຢັ້ງຢືນການອະນຸຍາດນໍາເຂົ້າສໍາລັບສິນຄ້າ ຫຼື ອຸປະກອນທີ່ຂຶ້ນກັບການຄຸ້ມຄອງຂອງຂະແໜງການ ເຊັ່ນ ນໍ້າມັນເຊື້ອໄຟ, ເຫຼັກເສັ້ນ, ຊີມັງ, ພາຫະນະຕ່າງໆ, ສານເຄມີ, ເຄື່ອງມື ຫຼື ອຸປະກອນການແພດ, ເຄື່ອງທົດລອງວິໄຈ, ເຄື່ອງສາຍແສງ, ແນວພັນພືດ, ສັດ ແລະ ອຸປະກອນເຕັກນິກຕ່າງໆ ຕາມແຕ່ລະປະເພດຂອງສິນຄ້າ ທີ່ໄດ້ກໍານົດໄວ້ໃນລະບຽບການກ່ຽວຂ້ອງ.

5. **ຄວາມຮັບຜິດຊອບຂອງບັນດາກົມພາຍໃນກະຊວງການເງິນ ແລະ ພາກສ່ວນຈັດຕັ້ງປະຕິບັດແຜນງານ/ໂຄງການ**

1. ກົມການເງິນຕ່າງປະເທດ ມີຄວາມຮັບຜິດຊອບດັ່ງນີ້:
   + ສັງລວມລາຍງານ ຕໍ່ລັດຖະມົນຕີກະຊວງການເງິນ ເພື່ອພິຈາລະນາອອກຂໍ້ຕົກລົງ ກ່ຽວກັບແຜນນໍາເຂົ້າ ໃຫ້ສາມາດນໍາໃຊ້ເປັນບ່ອນອີງ ສໍາລັບການປະຕິບັດນະໂຍບາຍພາສີ-ອາກອນ ແລະຄ່າທໍານຽມຕ່າງໆ;
   + ກວດກາຄວາມຖືກຕ້ອງຂອງເອກະສານ ແລ້ວນໍາສົ່ງໃຫ້ກົມພາສີ ພິຈາລະນາໃນການນໍາເຂົ້າຕົວຈິງ;
   + ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນໃນການສະເໜີແຜນນໍາເຂົ້າ ສອດຄ່ອງກັບເປົ້າໝາຍຂອງແຜນງານ/ໂຄງການ.

2. ກົມພາສີ ມີຄວາມຮັບຜິດຊອບ ດັ່ງນີ້:
   + ດໍາເນີນການກວດກາ, ຕິດຕາມການນໍາເຂົ້າວັດຖຸ, ອຸປະກອນ ແລະ ພາຫະນະຕ່າງໆ ທີ່ມາຮັບໃຊ້ແຜນງານ/ໂຄງການ ເພື່ອຮັບປະກັນຄວາມຮັດກຸມ ແລະ ສອດຄ່ອງກັບແຜນການນໍາເຂົ້າ;
   + ປະສານສົມທົບກັບກົມການເງິນຕ່າງປະເທດ ແລະ ແຜນງານ/ໂຄງການ ເພື່ອຮັບປະກັນໃຫ້ການນໍາເຂົ້າວັດຖຸ, ອຸປະກອນ ແລະ ພາຫະນະຕ່າງໆ ດ້ວຍຮູບການນໍາເຂົ້າຖາວອນ ຫຼື ຊົ່ວຄາວ ໄດ້ຖືກນໍາໃຊ້ເຂົ້າໃນເປົ້າໝາຍແຜນງານ/ໂຄງການ. ຖ້າຫາກມີການລອຍໃຊ້ ເຊັ່ນ ນໍາໄປຈໍາໜ່າຍພາຍໃນປະເທດ, ນໍາເຂົ້າເກີນແຜນຄວາມຕ້ອງການ ຫຼື ເກີນມູນຄ່າສັນຍາ ໂດຍບໍ່ໄດ້ຮັບອະນຸຍາດ, ຕ້ອງໄດ້ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອພິຈາລະນາການປະຕິບັດມາດຕະການຕາມລະບຽບກົດໝາຍ;
   + ສະຫຼຸບ ແລະ ລາຍງານການນໍາເຂົ້າວັດຖຸ, ອຸປະກອນ ແລະພາຫະນະຕ່າງໆ ທີ່ມາຮັບໃຊ້ແຜນງານ/ໂຄງການແຕ່ລະໄຕມາດ ໃຫ້ຄະນະນໍາກະຊວງການເງິນຮັບຊາບ ແລະສໍາເນົາສົ່ງກົມການເງິນຕ່າງປະເທດ, ກະຊວງການເງິນ ແລະ ກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ.

3. ພາກສ່ວນຈັດຕັ້ງປະຕິບັດແຜນງານ/ໂຄງການ ມີຄວາມຮັບຜິດຊອບດັ່ງນີ້:
   + ກະກຽມແຜນນໍາເຂົ້າ ໂດຍຄໍານຶງເຖິງການປະຕິບັດນະໂຍບາຍພາສີ-ອາກອນ ທີ່ກໍານົດໄວ້ໃນຄໍາແນະນໍາສະບັບນີ້, ປະກອບເອກະສານ ທີ່ຈໍາເປັນຕ່າງໆ ດັ່ງທີ່ໄດ້ລະບຸໄວ້ໃນຂໍ້ 4.(ຂ) ຂ້າງເທິງນີ້;

+ ຄຸ້ມຄອງຕິດຕາມການນຳໃຊ້ວັດຖຸ, ອຸປະກອນ ແລະ ພາຫະນະຕ່າງໆ ໃຫ້ສອດຄ່ອງກັບເປົ້າໝາຍຂອງ ແຜນງານ/ໂຄງການ.

+ ສະຫລຸບ ແລະ ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດແຜນນຳເຂົ້າ ແລະ ການນຳໃຊ້ຊັບສິນບັດຂອງ ແຜນງານ/ໂຄງການ ສົ່ງໃຫ້ກົມການເງິນຕ່າງປະເທດ ແລະ ກົມຄຸ້ມຄອງຊັບສິນຂອງລັດ, ກະຊວງການເງິນ ໃນແຕ່ລະໄຕມາດ ເພື່ອເປັນບ່ອນອີງໃນການຕິດຕາມ.

6. ວິທີການຈັດຕັ້ງປະຕິບັດ

(ກ) ມອບໃຫ້ກົມການເງິນຕ່າງປະເທດ, ກົມພາສີ ແລະ ກົມສ່ວຍສາອາກອນ ຈັດຕັ້ງເຜີຍແຜ່ຄຳແນະນຳສະບັບນີ້ ໃຫ້ພາກສ່ວນຈັດຕັ້ງປະຕິບັດແຜນງານ/ໂຄງການ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ໄດ້ຮັບຊາບ ເພື່ອພ້ອມກັນ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

(ຂ) ຄຳແນະນຳສະບັບນີ້ມີຜົນນຳໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີກະຊວງການເງິນ

ບຸນໂຈມ ອຸບົນປະເສີດ